ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຈີນສະໜອງເງິນກູ້ເພື່ອສົ່ງເສີມ SMEs ແກ່ລາວ




ລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສປ ຈີນ ໄດ້ມອບໃຫ້ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານພັດທະນາແຫ່ງຊາດຈີນ (CDB) ຮ່ວມກັນເຊັນສັນຍາເງິນກູ້ 300 ລ້ານໂດລາສະຫະຣັດ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ໃນ ສປປ ລາວ ຊຶ່ງພິທີໄດ້ຈັດຂຶ້ນໃນວັນທີ 9 ກໍລະກົດ 2019 ທີ່ໂຮງແຮມ ລາວພລາຊາ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ; ພ້ອມນີ້, ຍັງມີຄະນະນຳຈາກ ທຫລ, ທະນາຄານພັດທະນາແຫ່ງຊາດຈີນ, ຄະນະກຳມະການຮ່ວມມືລາວ-ຈີນ, ກະຊວງທີ່ກ່ຽວຂ້ອງ, ຕາງໜ້າສະຖານທູດ ສປ ຈີນ ປະຈຳ ສປປ ລາວ ເຂົ້າຮ່ວມ.

ໃນການຮ່ວມລົງນາມເຊັນສັນຍາເງິນກູ້ບ້ອງດັ່ງກ່າວ ຝ່າຍລາວໂດຍແມ່ນທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ແລະ ຝ່າຍຈີນ ໂດຍແມ່ນທ່ານ ຫົງ ເຈິ້ງ ຫົວ (Mr. Hong Zhenghua) ຫົວໜ້າສາຂາ CDB ແຂວງ ຢູນນານ. ໂດຍເຫັນໄດ້ເຖິງຄວາມໝາຍຄວາມສຳຄັນກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານໃນການຊຸກຍູ້ສົ່ງເສີມບົດບາດຂອງ SMEs ໃນການຂັບເຄື່ອນເສດຖະກິດໃຫ້ມີການພັດທະນາ ແລະ ຂະຫຍາຍຕົວໂດຍສະເພາະໃນເງື່ອນໄຂ ຂອງ ສປປ ລາວ ທີ່ບັນດາຫົວໜ່ວຍ SMEs ມີຄວາມຕ້ອງການແຫຼ່ງທຶນຈຳນວນຫຼວງຫຼາຍ; ດັ່ງນັ້ນ, ໃນຕົ້ນປີ 2017 ທຫລ ແລະ ທະນາຄານ CDB ຈຶ່ງມີການປຶກສາຫາລືກ່ຽວກັບການສະເໜີໃຫ້ເງິນກູ້ເພື່ອສົ່ງເສີມພັດທະນາ SMEs ແກ່ ສປປ ລາວ ໂດຍໄດ້ມີການລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືທາງດ້ານການເງິນ ເພື່ອສົ່ງເສີມ SMEs ໃນ ສປປ ລາວ ວົງເງິນ 300 ລ້ານໂດລາສະຫະລັດ ໃນວັນທີ 13 ພະຈິກ 2017 ລະຫວ່າງ ຜູ້ວ່າການ ທຫລ ແລະ ປະທານສະພາບໍລິຫານຂອງທະນາຄານ CDB ໃນໂອກາດທີ່ຄະນະຜູ້ແທນການນຳຂັ້ນສູງ ຂອງ ສປ ຈີນ ມາຢ້ຽມຢາມທາງລັດຖະກິດຢູ່ ສປປ ລາວ ໃນເດືອນ ພະຈິກ 2017.




ສຳລັບບ້ວງເງິນກູ້ດັ່ງກ່າວ ຈະແບ່ງການເບີກຖອນອອກເປັນ 3 ງວດ, ງວດລະ 100 ລ້ານ ໂດລາສະຫະລັດ ບົນພື້ນຖານເງື່ອນໄຂສັນຍາເງິນກູ້ທີ່ເຫັນດີນຳກັນ. ເພື່ອຜັນຂະຫຍາຍເນື້ອໃນຈິດໃຈຂອງ MOU ດັ່ງກ່າວ, ທຫລ ແລະ CDB ໄດ້ປຶກສາຫາລື ແລະ ເຮັດວຽກຮ່ວມກັນຫຼາຍຄັ້ງກ່ຽວກັບການຄົ້ນຄວ້າເອກະສານສັນຍາຕ່າງໆ. ມາຮອດວັນທີ 9 ກໍລະກົດນີ້, ທາງສອງຝ່າຍເຫັນດີລົງນາມໃນສັນຍາເງິນກູ້ດັ່ງກ່າວ. ພາຍຫຼັງມີການເຊັນສັນຍາເງິນກູ້ ແລະໄດ້ຮັບການເຫັນດີເບີກຖອນເງິນກູ້ຈາກທະນາຄານ CDB ຄາດວ່າຈະມີກຳລັງແຮງທາງດ້ານແຫຼ່ງເງິນທຶນສົມທົບກັບແຫຼ່ງທຶນຂອງທະນາຄານທຸລະກິດພາຍໃນປະເທດໃນການຊຸກຍູ້ວຽກງານການເຂົ້າເຖິງແຫຼ່ງທຶນ ແລະ ສ້າງຄວາມເຂັ້ມແຂງຂອງ SMEs ຫຼາຍຂຶ້ນ.

ບັນດາຫົວໜ່ວຍ SMEs ຈະສ້າງຜະລິດຕະພັນໃນການສົ່ງອອກ ລວມທັງສົ່ງອອກໄປ ສປ ຈີນ ແລະ ສົ່ງເສີມປີທ່ອງທ່ຽວ ລາວ-ຈີນ. ນອກນັ້ນ ຍັງຈະປະກອບສ່ວນເຂົ້າໃນການປັບປຸງລະບົບທະນາຄານຢູ່ ສປປ ລາວ ກ່ຽວກັບການຈັດຕັ້ງປະຕິບັດກົນໄກສະໜອງສິນເຊື່ອເພື່ອ SMEs ດີຂຶ້ນ ແລະ ຈະຊ່ວຍຊຸກຍູ້ຈັງຫວະການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ ຕາມແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 8 ທີ່ ກຳນົດໄວ້.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ